ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 0542 /ກວຕ

ນະຄອນຫຼວງວຽງຈັນ, ວັນທີ 16 MAY 2017

# ຂໍ້ຕົກລົງ
## ຂອງ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
## ວ່າດ້ວຍ ການຄຸ້ມຄອງສິນຄ້າຫຸ້ມຫໍ່ ຢູ່ ສປປ ລາວ
## (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍການວັດແທກ (ສະບັບປັບປຸງ) ເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 309/ນຍ, ລົງວັນທີ 28 ກັນຍາ 2011;
- ອີງຕາມການຄົ້ນຄ້ວາສະເໜີຂອງ ກົມມາດຕະຖານ ແລະ ວັດແທກ, ເລກທີ 007/ກວຕ.ກມວ, ລົງວັນທີ 05 ຕຸລາ 2016.

## ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍ, ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ກວດສອບຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢູ່ ສປປ ລາວ ໃຫ້ຖືກຕ້ອງຕາມລະບຽບການທີ່ກຳນົດໄວ້ ຢູ່ ສປປ ລາວ ແລະ ສາກົນ ເພື່ອສ້າງເງື່ອນໄຂອັນສະດວກໃນການ ຊື້-ຂາຍ, ແນໃສ່ເຮັດໃຫ້ສັງຄົມມີຄວາມຍຸຕິທຳ, ປອດໄພ, ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ແລະ ເຊື່ອມໂຍງກັບຫຼັກການກວດສອບສິນຄ້າຫຸ້ມຫໍ່ ລະຫວ່າງບັນດາປະເທດອາຊຽນ ແລະ ສາກົນ ເພື່ອຄຸ້ມຄອງສິນຄ້າຫຸ້ມຫໍ່ທີ່ພົວພັນເຖິງຄຸນລັກສະນະ, ຂະໜາດ, ນ້ຳໜັກ, ມວນສານ ແລະ ບໍລິມາດທີ່ໄດ້ລະບຸໄວ້ໃນສະຫຼາກຂອງສິນຄ້າຫຸ້ມຫໍ່.

ມາດຕາ 2. ສິນຄ້າຫຸ້ມຫໍ່

ສິນຄ້າຫຸ້ມຫໍ່ ແມ່ນສິນຄ້າທີ່ຖືກບັນຈຸໃນພາຊະນະ ຫຼື ສິ່ງຫຸ້ມຫໍ່ໃດໜຶ່ງ ເຊິ່ງມີການບົ່ງບອກເຖິງຄຸນລັກສະນະ, ກຳນົດ ແລະ ລະບຸປະລິມານສິນຄ້າໄວ້ໃນສະຫຼາກ ກ່ອນຈະວາງຈຳໜ່າຍ. ປະລິມານຜະລິດຕະພັນ ບໍ່ສາມາດປ່ຽນແປງໄດ້ ໃນເມື່ອບໍ່ມີການເປີດ ຫຼື ດັດແກ້ສິ່ງຫຸ້ມຫໍ່ນັ້ນ.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ປະລິມານຄ່າກຳນົດ** (Qn) ໝາຍເຖິງ ປະລິມານຂອງສິນຄ້າ ທີ່ໄດ້ກຳນົດໄວ້ໃນສະຫຼາກຂອງສິນຄ້າຫຸ້ມຫໍ່ນັ້ນ. ປະລິມານຄ່າກຳນົດໄດ້ແບ່ງອອກເປັນ 2 ປະເພດຄື:
   - 1.1 **ຄ່າກຳນົດ** ໝາຍເຖິງ ປະລິມານຕົວຈິງຂອງຜະລິດຕະພັນທີ່ບັນຈຸໃນພາຊະນະຫຸ້ມຫໍ່ ເຊິ່ງໄດ້ລະບຸໄວ້ໃນສະຫຼາກຂອງຜະລິດຕະພັນຫຸ້ມຫໍ່;
   - 1.2 **ບໍລິມາດສຸດທິ** ໝາຍເຖິງ ປະລິມານຜະລິດຕະພັນທີ່ບັນຈຸຢູ່ໃນສິ່ງຫຸ້ມຫໍ່ ຊຶ່ງມີຫົວໜ່ວຍວັດແທກເປັນຄວາມຍາວ, ບໍລິມາດ, ນໍ້າໜັກ, ຈຳນວນ ຫຼື ມວນສານ ທີ່ວັດແທກແລ້ວໂດຍບໍ່ລວມເອົາພາຊະນະຫຸ້ມຫໍ່;
2. **ອົງການຄຸ້ມຄອງການວັດແທກ** ໝາຍເຖິງ ກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນ ແລະ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງທີ່ຖືກມອບໝາຍ;
3. **ຊຸດຜະລິດຕະພັນ** (Lot) ໝາຍເຖິງ ສິນຄ້າຫຸ້ມຫໍ່ ທີ່ບັນຈຸໃນພາຊະນະຫຸ້ມຫໍ່ທີ່ມີ ຂະໜາດ, ຊື່ ຫຼື ເຄື່ອງໝາຍການຄ້າທີ່ຜະລິດອອກໃນໄລຍະເວລາດຽວກັນ;
4. **ຊຸດຜະລິດຕະພັນກວດສອບ** ໝາຍເຖິງ ຕົວຢ່າງຂອງສິນຄ້າຫຸ້ມຫໍ່ທີ່ໄດ້ຄັດເລືອກ ຫຼື ສຸ່ມເອົາມາເປັນຕົວແທນຂອງຜະລິດຕະພັນໃນຊຸດນັ້ນ ເພື່ອມາກວດສອບ;
5. **ການຫຸ້ມຫໍ່ທີ່ບໍ່ສອດຄ່ອງ** ໝາຍເຖິງ ການຫຸ້ມຫໍ່ທີ່ບໍ່ຖືກຕ້ອງຕາມລະບຽບການທີ່ກຳນົດໄວ້ເຊັ່ນ: ມີຄ່າຜິດພາດຫຼາຍກວ່າຄ່າອະນຸຍາດ (T) ທີ່ໄດ້ກຳນົດໄວ້ໃນຕາຕະລາງ 1 ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;
6. **ການສຸ່ມເອົາຕົວຢ່າງ** ໝາຍເຖິງ ການເກັບຕົວຢ່າງຂອງສິນຄ້າຫຸ້ມຫໍ່ ຕາມວິທີການທີ່ກຳນົດໄວ້;
7. **ການເກັບເອົາຕົວຢ່າງ** (n) ໝາຍເຖິງ ສິນຄ້າຫຸ້ມຫໍ່ທີ່ໄດ້ຈາກຊຸດຜະລິດຕະພັນ ແລະ ສິນຄ້າ ທີ່ຖືກນຳໃຊ້ ເພື່ອສະໜອງຂໍ້ມູນທີ່ຈະນຳໃຊ້ເປັນພື້ນຖານໃນການຕັດສິນໃຈກ່ຽວກັບ ການສ້າງຄວາມສອດຄ່ອງໃຫ້ແກ່ຊຸດການກວດສອບ. ຕົວອັກສອນ *'n'* ໝາຍເຖິງ ຈຳນວນຂອງການເກັບເອົາຕົວຢ່າງ;

8. **ສະຫຼາກ** (label) ໝາຍເຖິງ ສິ່ງທີ່ຂຽນ, ພິມ ຫຼື ສິ່ງທີ່ສະແດງດ້ວຍຮູບພາບ ທີ່ແປະໃສ່, ຕິດໃສ່, ຫຼໍ່ໃສ່, ປ້ຳເປັນຮູບໃສ່, ປະກອບມາພ້ອມສິ່ງຫຸ້ມຫໍ່ທີ່ບັນຈຸຜະລິດຕະພັນໃດໜຶ່ງ ເພື່ອເປັນການໂຄສະນາຍີ່ຫໍ້, ການບົ່ງບອກ ຫຼື ການໃຫ້ຂໍ້ມູນກ່ຽວກັບຜະລິດຕະພັນ ຫຼື ສິ່ງທີ່ບັນຈຸຢູ່ໃນສິ່ງຫຸ້ມຫໍ່;
9. **ຄ່າຜິດດ່ຽງທີ່ອະນຸຍາດໄດ້** (T) ໝາຍເຖິງ ປະລິມານທີ່ຜິດດ່ຽງຂອງສິນຄ້າຫຸ້ມຫໍ່ ທີ່ອະນຸຍາດໃຫ້ຫຼຸດ ຫຼື ລື່ນ ຕາມລະບຽບການທີ່ກຳນົດໄວ້;
10. **ການດຳເນີນທຸລະກິດກ່ຽວກັບສິນຄ້າຫຸ້ມຫໍ່** ໝາຍເຖິງ ຜູ້ທີ່ປະກອບການກ່ຽວກັບ ການຜະລິດ, ບັນຈຸ ຫຼື ຫຸ້ມຫໍ່ ແລະ ບໍລິການຕ່າງໆ ກ່ຽວກັບສິນຄ້າຫຸ້ມຫໍ່, ເປັນຕົ້ນແມ່ນ: ຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ສົ່ງອອກ ແລະ ຜູ້ຈຳໜ່າຍ;
11. **ຜູ້ສະໜອງ** ໝາຍເຖິງ ຜູ້ຜະລິດ, ຜູ້ຈຳໜ່າຍ, ຜູ້ຂາຍ ແລະ ຜູ້ບໍລິການ;
12. **ຜູ້ບໍລິໂພກ** ໝາຍເຖິງຜູ້ຊື້ ແລະ ຜູ້ຊົມໃຊ້.

ມາດຕາ 4. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຜະລິດ, ນຳເຂົ້າ, ສົ່ງອອກ, ຫຸ້ມຫໍ່ ແລະ ຈຳໜ່າຍ ສິນຄ້າຫຸ້ມຫໍ່ທຸກປະເພດ ຕາມລາຍການທີ່ໄດ້ກຳນົດໄວ້ ຢູ່ ສປປ ລາວ.

## ໝວດທີ 2
## ການແຈ້ງປະລິມານ ຂອງຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່

**ມາດຕາ 5. ການແຈ້ງປະລິມານ ຂອງຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່**

**ການລະບຸປະລິມານຂອງ ຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ໃຫ້ປະຕິບັດ ດັ່ງລຸ່ມນີ້:**

1. ຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ທີ່ເປັນຂະໜາດ ຕ້ອງລະບຸເປັນລວງຍາວ;
2. ຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ທີ່ເປັນທາດແຂງ, ເຄິ່ງແຂງ ເຊິ່ງລວມມີທັງທາດແຂງ ແລະ ທາດແຫຼວປະສົມກັນ ຕ້ອງລະບຸເປັນນ້ຳໜັກ;
3. ຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ທີ່ເປັນທາດແຫຼວ ຕ້ອງລະບຸເປັນບໍລິມາດ;
4. ຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ທີ່ມີປະລິມານຄ່າກຳນົດນ້ອຍກວ່າ 5 ກລາມ (5g) ຫຼື 5 ມິນລິແມັດ (5mm) ແມ່ນບໍ່ຈຳເປັນຈະຕ້ອງລະບຸຄ່າປະລິມານຄ່າກຳນົດໃນສະຫຼາກຫຸ້ມຫໍ່, ແຕ່ຖ້າຫາກຕ້ອງການ ແມ່ນໃຫ້ໃສ່ຄ່າສະເລ່ຍຂອງສິນຄ້າຫຸ້ມຫໍ່ທັງໝົດຫຼາຍກວ່າ ຫຼື ເທົ່າກັບປະລິມານຄ່າກຳນົດ.

ມາດຕາ 6. ການແຈ້ງສິນຄ້າຫຸ້ມຫໍ່ທີ່ເປັນຈຳນວນ

1. ຈຳນວນຫຸ້ມຫໍ່ທີ່ໜ້ອຍກ່ວາ ຫຼື ເທົ່າກັບ 50 ອັນ, ປະລິມານບັນຈຸຕ້ອງບໍ່ໜ້ອຍກ່ວາປະລິມານຄ່າກຳນົດ;
2. ຈຳນວນຫຸ້ມຫໍ່ທີ່ຫຼາຍກ່ວາ 50 ອັນ, ຄ່າສະເລ່ຍປະລິມານຄ່າກຳນົດຂອງຈຳນວນຫຸ້ມຫໍ່ຈະຕ້ອງເທົ່າກັບ ປະລິມານຄ່າກຳນົດ ແລະ ຄ່າອະນຸຍາດຜິດດ່ຽງແມ່ນເທົ່າກັບ 1 ສ່ວນຮ້ອຍຂອງສິນຄ້າເທົ່າກັບ (1%);

ຕາຕະລາງ 01: ຄ່າອະນຸຍາດຜິດດ່ຽງ

| ປະລິມານທີ່ກຳນົດ (Qn) ຄິດໄລ່ເປັນກຣາມ (g) ຫຼື ມິນລີລິດ (ml) | | ຄ່າອະນຸຍາດຜິດດ່ຽງ ຄິດໄລ່ເປັນເປີເຊັນ (%) ຂອງ Qn | |
|---|---|---|---|
| ແຕ່ | ເຖິງ | % | mg or ml |
| 5 | 50 | 9.0 | - |
| 50 | 100 | - | 4.5 |
| 100 | 200 | 4.5 | - |
| 200 | 300 | - | 9.0 |
| 300 | 500 | 3.0 | - |
| 500 | 1.000 | - | 15.0 |
| 1.000 | 10.000 | 1.5 | |
| 10.000 | 15.000 | | 150 |
| 15.000 | 50.000 | 1 | |

ໝາຍເຫດ: ເມື່ອໃດທີ່ໄດ້ນຳໃຊ້ຕາຕະລາງດັ່ງກ່າວນີ້, ບັນດາຄ່າຂອງຄ່າຜິດພາດທີ່ສະແດງເປັນອັດຕາສ່ວນຮ້ອຍ, ນ້ຳໜັກ ຫຼື ບໍລິມາດ ແມ່ນຈະຕ້ອງໄດ້ປັບຄ່າດັ່ງກ່າວເປັນເລກເສດ 0.1 ກຼາມ (g) ຫຼື ມິນລີລິດ (ml).

3. ທຸກການດຳເນີນງານ ການກວດສອບປະລິມານຂອງສິນຄ້າຫຸ້ມຫໍ່ ທີ່ຄິດໄລ່ເປັນບໍລິມາດ ຜົນການຄິດໄລ່ທີ່ໄດ້ຈາກການກວດສອບໃນເວລານັ້ນ (ພາຍໃຕ້ອຸນຫະພູມຂອງຫ້ອງທົດລອງ ໃນເວລາກວດສອບ) ແມ່ນຕ້ອງໄດ້ປ່ຽນເປັນຜົນຄິດໄລ່ໃນອຸນຫະພູມ 20 ອົງສາເຊັນຊຽດ (20°c ±1°c) (ຈາກສູດຄິດໄລ່ທີ່ໄດ້ກຳນົດໄວ້) ເປັນຕົ້ນ: ຜະລິດຕະພັນນ້ຳມັນ, ເຄື່ອງເຢັນ ແລະ ຜະລິດຕະພັນແຊ່ເຢັນອື່ນໆ.

# ໝວດທີ 3

## ການຄຸ້ມຄອງ, ກວດສອບ, ເກັບຄ່າທຳນຽມ ແລະ ຄ່າປັບໃໝ

**ມາດຕາ 7. ຫຼັກການພື້ນຖານຂອງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່**

ຫຼັກການພື້ນຖານ ຂອງການຄຸ້ມຄອງ, ກວດສອບຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ແມ່ນແນໃສ່ເພື່ອຍົກສູງຄຸນນະພາບ ແລະ ປະສິດທິພາບທາງດ້ານເສດຖະກິດ-ສັງຄົມ ກ່ຽວກັບການຄຸ້ມຄອງ, ບໍລິການ ແລະ ປົກປ້ອງຜູ້ຊົມໃຊ້ ບົນພື້ນຖານຫຼັກການ ດັ່ງນີ້:

1. ຮັບປະກັນຄວາມປອດໄພຕໍ່ຊີວິດ, ຊັບສິນ, ສະພາບແວດລ້ອມ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ;
2. ຮັບປະກັນການເປີດກ້ວາງ, ຄວາມຍຸຕິທຳ, ສະເໝີພາບ ແລະ ໂປ່ງໃສ, ສາມາດກວດສອບໄດ້, ຫຼີກເວັ້ນການຈຳແນກ, ສ້າງອຸປະສັກກີດຂວາງຕໍ່ທຸລະກິດ ກ່ຽວກັບຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່;
3. ຮັບປະກັນຄວາມສອດຄ່ອງ ກັບຫຼັກການ, ລະບຽບການແຫ່ງຊາດ, ພາກພື້ນ ແລະ ສາກົນ; ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານ ໃນການຄຸ້ມຄອງ, ກວດສອບຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່;
4. ຮັບປະກັນໃຫ້ຜູ້ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ໃຫ້ເປັນໄປຕາມຫຼັກການ ແລະ ຂັ້ນຕອນການຄຸ້ມຄອງ, ກວດສອບ ຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່;
5. ການດຳເນີນການກວດກາ ທຸກຄັ້ງທີ່ຄະນະກຳມະການລົງກວດກາ ແມ່ນຕ້ອງມີໃບແຈ້ງການ ຫຼື ຂໍ້ຕົກລົງ ທີ່ອອກໃຫ້ໂດຍກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນ ຕາມການມອບໝາຍ.

**ມາດຕາ 8. ຫຼັກການເກັບຕົວຢ່າງ.**

1. ການເກັບຕົວຢ່າງແບບຊຸ່ມເອົາ ແມ່ນສິນຄ້າຫຸ້ມຫໍ່ທີ່ຖືກຄັດເລືອກແບບຊຸ່ມເອົາ ເພື່ອເປັນຕົວແທນຂອງສິນຄ້າທັງໝົດ ທີ່ມີຄວາມໜ້າຈະເປັນໄປໄດ້ຄືກັນ ຊຶ່ງຈະຖືກລວມຢູ່ໃນຕົວຢ່າງ;
2. ຈຳນວນຂອງຕົວຢ່າງສິນຄ້າຫຸ້ມຫໍ່ ທີ່ໄດ້ຈາກຊຸດການກວດສອບ ແລະ ຖືກນຳໃຊ້ເພື່ອສະໜອງຂໍ້ມູນທີ່ຈະໃຊ້ເປັນພື້ນຖານໃຫ້ແກ່ການຕັດສິນໃຈກ່ຽວກັບຄວາມສອດຄ່ອງຂອງຊຸດການກວດສອບ;
3. ສິນຄ້າຫຸ້ມຫໍ່ທີ່ຜະລິດຢູ່ພາຍໃນປະເທດ ແມ່ນມີການກວດກາເກັບຕົວຢ່າງກວດສອບຢູ່ບ່ອນທີ່ດຳເນີນການຫຸ້ມຫໍ່;
4. ສິນຄ້າຫຸ້ມຫໍ່ທີ່ນຳເຂົ້າ ແມ່ນເກັບຕົວຢ່າງເພື່ອກວດສອບຢູ່ນຳສາງສິນຄ້ານຳເຂົ້ານັ້ນ.

ມາດຕາ 9. ວິທີການກວດສອບ

1. ສິນຄ້າຫຸ້ມຫໍ່ ທີ່ຈະນຳມາເປັນຕົວຢ່າງກວດສອບຈະຕ້ອງໄດ້ຖືກຄັດເລືອກ ໂດຍການນຳໃຊ້ວິທີການເກັບຕົວຢ່າງຕາມຫຼັກການທີ່ກຳນົດໄວ້;
2. ການກວດສອບໃນບາງປະເພດ ສາມາດກວດສອບໄດ້ກັບສະຖານທີ່ນັ້ນເລີຍ ແຕ່ໃນບາງຜະລິດຕະພັນທີ່ບໍ່ອາດສາມາດກວດໄດ້ກັບທີ່ ຊຶ່ງຈະນຳເອົາຕົວຢ່າງມາກວດສອບຢູ່ຫ້ອງທົດລອງ ຂອງອົງການຄຸ້ມຄອງການວັດແທກ ຫຼື ຫ້ອງທົດລອງອື່ນທີ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງການວັດແທກ.

ມາດຕາ 10. **ຮູບແບບກວດສອບສິນຄ້າຫຸ້ມຫໍ່**

ການກວດສອບສິນຄ້າຫຸ້ມຫໍ່ມີ 3 ຮູບແບບຄື:

1. ກວດສອບ ສິນຄ້າກ່ອນນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ;
2. ກວດສອບຕາມແຜນປົກກະຕິ 01 ຄັ້ງ/ປີ; ແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
3. ກວດສອບແບບກະທັນຫັນ ແລະ ຕາມການຮ້ອງຂໍ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ມາດຕາ 11. **ເອກະສານຂໍກວດສອບ ແລະ ຢັ້ງຢືນສິນຄ້າຫຸ້ມຫໍ່**

ສິນຄ້າຫຸ້ມຫໍ່ທຸກປະເພດ ຕາມລາຍການໃນເອກະສານຊ້ອນທ້າຍ 3 ທີ່ໄດ້ກຳນົດໄວ້ ກ່ອນຈະນຳເຂົ້າ, ສົ່ງອອກ, ຫຸ້ມຫໍ່ ແລະ ຈຳໜ່າຍ ຢູ່ ສປປ ລາວ ຕ້ອງໄດ້ຍື່ນຄຳຮ້ອງຂໍຈົດທະບຽນສິນຄ້າຫຸ້ມຫໍ່ນັ້ນຕໍ່ອົງການຄຸ້ມຄອງທີ່ກ່ຽວຂ້ອງ, ຕາມແບບຟອມ ແລະ ເອກະສານຂອງໜ່ວຍງານກວດສອບ ດັ່ງລຸ່ມນີ້:

1. ໃບຄຳຮ້ອງຂໍຈົດທະບຽນສິນຄ້າຫຸ້ມຫໍ່;
2. ລາຍການລະອຽດກ່ຽວກັບສິນຄ້າຫຸ້ມຫໍ່ ທີ່ນຳມາຈົດທະບຽນ;
3. ສຳເນົາເອກະສານທີ່ປະກອບກິດຈະການ;
4. ຕົວຢ່າງຜະລິດຕະພັນ ແລະ ສິນຄ້າ.

ມາດຕາ 12. **ສະຫຼາກ ແລະ ເຄື່ອງໝາຍ**

1. ສິນຄ້າຫຸ້ມຫໍ່ທຸກປະເພດທີ່ ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ຢູ່ໃນ ສປປ ລາວ ຕ້ອງມີສະຫຼາກພິມເປັນພາສາລາວ ເພື່ອແຈ້ງຂໍ້ມູນຕ່າງໆກ່ຽວກັບຜະລິດຕະພັນດັ່ງກ່າວ. ການລະບຸຂໍ້ຄວາມໃນສະຫຼາກຕ້ອງ ຊັດເຈນ, ອ່ານງ່າຍ, ເຂົ້າໃຈແຈ້ງ ແລະ ບໍ່ສາມາດລຶບໄດ້, ສຳລັບພາສາຕ່າງປະເທດຢູ່ໃນສະຫຼາກ ຕ້ອງມີເນື້ອໃນສອດຄ່ອງກັບພາສາລາວທີ່ໄດ້ກຳນົດໄວ້ ແລະ ມີຂໍ້ຄວາມ ດັ່ງນີ້:

- ຊື່ຂອງສິນຄ້າຫຸ້ມຫໍ່;

- ຊື່ ແລະ ທີ່ຢູ່ຂອງໂຮງງານ ຫຼື ບໍລິສັດ, ຜູ້ຜະລິດ, ຜູ້ຫຸ້ມຫໍ່, ຜູ້ນໍາເຂົ້າ ຫຼື ຜູ້ຈໍາໜ່າຍ;
- ປະລິມານທີ່ກໍານົດ (ການລະບຸປະລິມານທີ່ກໍານົດ ຕ້ອງສອດຄ່ອງກັບຫົວໜ່ວຍວັດແທກຂອງ ສປປ ລາວ ຫຼື ສາກົນ (SI) ທີ່ກໍານົດໄວ້);
- ວັນ, ເດືອນ, ປີຜະລິດ;
- ວັນ, ເດືອນ, ປີໝົດອາຍຸ;
- ຂໍ້ແນະນໍາການນໍາໃຊ້ ແລະ ການເກັບຮັກສາ;
- ຈໍານວນ, ປະລິມານສຸດທິ, ບໍລິມາດ;
- ສ່ວນປະກອບທີ່ກໍານົດແຈ້ງອັດຕາສ່ວນປະກອບ;
- ຄໍາເຕືອນ.

2. ກໍລະນີສິນຄ້າຫຸ້ມຫໍ່ທີ່ເປັນທາດປະສົມ, ແຂງ ແລະ ແຫຼວປະສົມກັນ (ມີທັງທາດແຂງ ແລະ ທາດແຫຼວ) ການລະບຸປະລິມານຄ່າທີ່ກໍານົດ ແລະ ນໍ້າໜັກຂອງທາດປະສົມໄວ້ໃນສະຫຼາກນັ້ນຕ້ອງຢູ່ໃນຂອບເຂດດຽວກັນກັບຂໍ້ຄວາມຊີ້ບອກປະລິມານຄ່າກໍານົດ.

**ມາດຕາ 13. ຂະໜາດຕົວໜັງສື ແລະ ຕົວເລກຂອງສະຫຼາກ.**

ຂະໜາດຕົວໜັງສື ແລະ ຕົວເລກທີ່ລະບຸໃນສະຫຼາກ ຊີ້ບອກເຖິງປະລິມານຄ່າກໍານົດຂອງສິນຄ້າຫຸ້ມຫໍ່ຕ້ອງໄດ້ປະຕິບັດຕາມຕາຕະລາງ 02 ຄື:

ຕາຕະລາງ 02: ຄ່າອະນຸຍາດນ້ອຍສຸດສໍາລັບຂະໜາດຂອງຕົວໜັງສື ແລະ ຕົວເລກ

| ປະລິມານຄ່າທີ່ກໍານົດ ຄິດໄລ່ເປັນ ກລາມ (g) ຫຼື ມິນລີລິດ (ml) | ຂະໜາດນ້ອຍສຸດຂອງຕົວໜັງສື ແລະ ຕົວເລກ ຫົວໜ່ວຍເປັນມິນລີແມັດ (mm) |
|---|---|
| ໜ້ອຍກວ່າ 50 | 2 |
| ຫຼາຍກວ່າ 50 ເຖິງ 200 | 3 |
| ຫຼາຍກວ່າ 200 ເຖິງ 1.000 | 4 |
| ຫຼາຍກວ່າ 1.000 | 6 |

ຖ້າສິນຄ້າຫຸ້ມຫໍ່ທີ່ລະບຸເປັນຈໍານວນອັນ, ລວງຍາວ ແລະ ເນື້ອທີ່, ຂະໜາດຂອງຕົວໜັງສື ແລະ ຕົວເລກນ້ອຍສຸດບໍ່ໃຫ້ຫຼຸດ 2 ມິນລີລິດ (2ມມ ຫຼື 2mm).

**ມາດຕາ 14. ການພິຈາລະນາ ແລະ ອະນຸມັດເອກະສານ**

1. ຮັບຄໍາຮ້ອງ ໃນເມື່ອເຫັນວ່າເອກະສານຄົບຖ້ວນຕາມທີ່ລະບຸໄວ້ໃນມາດຕາ 11;
2. ເອກະສານເພື່ອຂໍກວດສອບ ແລະ ຢັ້ງຢືນສິນຄ້າຫຸ້ມຫໍ່ ຕ້ອງໄດ້ຮັບການພິຈາລະນາພາຍໃນ 05 ວັນ (ຫ້າວັນ) ລັດຖະການ;

3. ພາຍຫຼັງເອກະສານຄົບຖ້ວນ ໄດ້ຜ່ານການກວດສອບຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການ ທີ່ໄດ້ກຳນົດໄວ້ແລ້ວ ຕ້ອງອອກໃບຢັ້ງຢືນຄວາມຖືກຕ້ອງຂອງສິນຄ້າຫຸ້ມຫໍ່ ພາຍໃນກຳນົດ ບໍ່ໃຫ້ເກີນ 10 ວັນ (ສິບວັນ) ລັດຖະການ.

**ມາດຕາ 15. ການອອກໃບຢັ້ງຢືນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດກ່ຽວກັບສິນຄ້າຫຸ້ມຫໍ່ໃນ ສປປ ລາວ ກ່ອນຈະນຳເຂົ້າ, ສົ່ງອອກ, ຫຸ້ມຫໍ່ ແລະ ຈຳໜ່າຍ ຕ້ອງໄດ້ຜ່ານການກວດສອບ, ຢັ້ງຢືນຄວາມຖືກຕ້ອງຈາກກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນ ຕາມການມອບໝາຍ ຫຼື ຕາມການແບ່ງຂັ້ນຄຸ້ມຄອງ.

ໃບຢັ້ງຢືນການຈົດທະບຽນຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ແມ່ນອອກໃຫ້ເທື່ອດຽວໂດຍບໍ່ມີກຳນົດ.

**ມາດຕາ 16. ຄ່າທຳນຽມ, ຄ່າບໍລິການກວດສອບ ແລະ ຄ່າປັບໃໝ**

ການຈົດທະບຽນຜະລິດຕະພັນ ແລະ ສິນຄ້າຫຸ້ມຫໍ່ ຕ້ອງໄດ້ເສຍຄ່າທຳນຽມ, ຄ່າບໍລິການ ແລະ ມາດຕະການປັບໃໝ ດັ່ງນີ້:

1. ຄ່າທຳນຽມ, ຄ່າບໍລິການກວດສອບ ແມ່ນອີງຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບວຽກງານວັດແທກ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
1. ຄ່າປັບໃໝແມ່ນອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບໃໝ ແລະ ມາດຕະການຕໍ່ຜູ້ລະເມີດກົດໝາຍມາດຕະຖານ ແລະ ກົດໝາຍວັດແທກ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 4
## ສິດ, ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່

**ມາດຕາ 17. ອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່**

ອົງການຄຸ້ມຄອງ ກວດສອບ ແລະ ຢັ້ງຢືນສິນຄ້າຫຸ້ມຫໍ່ແມ່ນ ກົມມາດຕະຖານ ແລະ ວັດແທກ, ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນ ຕາມການມອບໝາຍ ຫຼື ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 18. ສິດ ຂອງອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່**

ອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່ມີສິດ ດັ່ງນີ້:

1. ຄຸ້ມຄອງລະບົບການກວດສອບສິນຄ້າຫຸ້ມຫໍ່ ໃຫ້ສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ຂໍ້ກຳນົດຂອງພາກພື້ນ ແລະ ສາກົນທີ່ກຳນົດໄວ້;

2. ເກັບຕົວຢ່າງສິນຄ້າຫຸ້ມຫໍ່ໄປກວດສອບ ຊຶ່ງພົວພັນເຖິງຂະໜາດ, ນໍ້າໜັກ ຫຼື ມວນສານ ແລະ ບໍລິມາດ ທີ່ໄດ້ລະບຸໄວ້ໃນສະຫຼາກຂອງສິນຄ້າຫຸ້ມຫໍ່ ໃຫ້ສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ຂໍ້ກໍານົດຂອງພາກພື້ນ ແລະ ສາກົນ ກ່ອນການຜະລິດ, ນໍາເຂົ້າ, ສົ່ງອອກ, ຫຸ້ມຫໍ່ ແລະ ຈໍາໜ່າຍ;
3. ອອກໃບຢັ້ງຢືນການກວດສອບ ພາຍຫຼັງໄດ້ຮັບການກວດສອບທີ່ຖືກຕ້ອງຕາມລະບຽບການ ທີ່ກໍານົດໄວ້;
4. ໃນກໍລະນີຜົນການກວດສອບນັ້ນບໍ່ສອດຄ່ອງຕາມທີ່ກໍານົດໄວ້, ພະນັກງານທີ່ກວດສອບ ຕ້ອງໄດ້ເຮັດບົດບັນທຶກ ແລະ ສັ່ງໂຈະການນໍາເຂົ້າ, ສົ່ງອອກ ແລະ ຈໍາໜ່າຍສິນຄ້າຫຸ້ມຫໍ່ນັ້ນໄວ້ຊົ່ວຄາວ ເພື່ອລາຍງານຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງແກ້ໄຂ.

**ມາດຕາ 19. ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່**

ອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່ມີໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກວດສອບສິນຄ້າຫຸ້ມຫໍ່ ໃຫ້ສອດຄ່ອງຕາມລະບຽບການເຕັກນິກແຫ່ງຊາດ, ພາກພື້ນ ແລະ ສາກົນ;
2. ມີຄວາມຍຸຕິທໍາ, ໂປ່ງໃສ, ສະເໝີພາບ ແລະ ມີຄວາມບໍລິສຸດໃນໜ້າທີ່ຄວາມຮັບຜິດຊອບ;
3. ກໍານົດເວລາ ໃນການຈັດຕັ້ງປະຕິບັດການກວດສອບສິນຄ້າຫຸ້ມຫໍ່ ຢ່າງຈະແຈ້ງໃຫ້ແກ່ຜູ້ຜະລິດ, ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ຫຸ້ມຫໍ່ (ນອກຈາກການກວດແບບສຸກເສີນ);
4. ແນະນໍາຜູ້ຜະລິດ, ຫຸ້ມຫໍ່, ນໍາເຂົ້າ, ສົ່ງອອກ ແລະ ຈໍາໜ່າຍ ສິນຄ້າຫຸ້ມຫໍ່ ກ່ຽວກັບຂັ້ນຕອນການແຈ້ງເອກະສານ ຂໍອະນຸຍາດກວດສອບສິນຄ້າຫຸ້ມຫໍ່;
5. ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆໃຫ້ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານການກວດສອບສິນຄ້າຫຸ້ມຫໍ່;
6. ລາຍງານກ່ຽວກັບສະພາບການເຄື່ອນໄຫວການກວດສອບສິນຄ້າຫຸ້ມຫໍ່ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຂັ້ນເທິງ;
7. ອອກໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ທີ່ໄດ້ຜ່ານການກວດກາຖືກຕ້ອງ;
8. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5

## ສິດ ແລະ ພັນທະ

**ມາດຕາ 20. ສິດຂອງຜູ້ດໍາເນີນທຸລະກິດສິນຄ້າຫຸ້ມຫໍ່**

ຜູ້ດໍາເນີນທຸລະກິດສິນຄ້າຫຸ້ມຫໍ່ມີສິດ ດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ກ່ຽວກັບສິນຄ້າຫຸ້ມຫໍ່ ພາຍຫຼັງໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;
2. ຮ້ອງຂໍຄວາມເປັນທຳຕໍ່ພາກສ່ວນທີ່ກ່ຽວຂ້ອງ ຫາກເຫັນວ່າການກວດສອບສິນຄ້າຫຸ້ມຂອງຕົນບໍ່ໄດ້ຮັບຄວາມເປັນທຳ;
3. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 21. ສິດຂອງຜູ້ຊົມໃຊ້ສິນຄ້າຫຸ້ມຫໍ່**

ຜູ້ຊົມໃຊ້ສິນຄ້າຫຸ້ມຫໍ່ມີສິດ ດັ່ງນີ້:

1. ເລືອກເຟັ້ນສິນຄ້າຫຸ້ມຫໍ່ຕາມຄວາມຕ້ອງການຂອງຕົນ;
2. ຮ້ອງຮຽນຕໍ່ພາກສ່ວນກ່ຽວຂ້ອງ ເມື່ອເຫັນວ່າ ການຫຸ້ມຫໍ່ສິນຄ້າທີ່ຕົນໄດ້ຮັບບໍ່ມີຄວາມຍຸຕິທຳ ແລະ ບໍ່ສອດຄ່ອງກັບລະບຽບການ;
3. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 22. ພັນທະຂອງຜູ້ດຳເນີນທຸລະກິດສິນຄ້າຫຸ້ມຫໍ່**

ຜູ້ດຳເນີນທຸລະກິດສິນຄ້າຫຸ້ມຫໍ່ມີພັນທະ ດັ່ງນີ້:

1. ປະຕິບັດຕາມກົດໝາຍ ວ່າດ້ວຍການວັດແທກ ແລະ ຂໍ້ຕົກລົງສະບັບນີ້;
2. ຮັບຜິດຊອບຕໍ່ທຸກຜົນເສຍຫາຍທີ່ເກີດຂຶ້ນ ຈາກສິນຄ້າຫຸ້ມຫໍ່ທີ່ຕົນໄດ້ດຳເນີນທຸລະກິດນັ້ນ;
3. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກໃຫ້ແກ່ອົງການຄຸ້ມຄອງການວັດແທກໃນແຕ່ລະຄັ້ງທີ່ມີການກວດສອບສິນຄ້າຫຸ້ມຫໍ່;
4. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 6

## ຂໍ້ຫ້າມ

**ມາດຕາ 23. ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມສຳລັບຜູ້ດຳເນີນທຸລະກິດມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ, ສົ່ງອອກ, ຜະລິດ, ຈຳໜ່າຍ ແລະ ຫຸ້ມຫໍ່ສິນຄ້າ ທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງຈາກ ກົມມາດຕະຖານ ແລະ ວັດແທກ, ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ທີ່ຖືກມອບໝາຍ;
2. ຂັດຂວາງການປະຕິບັດງານ ຂອງເຈົ້າໜ້າທີ່ລົງກວດສອບ ແລະ ກວດກາວຽກງານວັດແທກ;
3. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ກວດສອບ;

4. ປອມແປງເອກະສານ, ການຢັ້ງຢືນ ກ່ຽວກັບສິນຄ້າຫຸ້ມຫໍ່.

**ມາດຕາ 24. ຂໍ້ຫ້າມສໍາລັບພະນັກງານ ທີ່ປະຕິບັດໜ້າທີ່ກວດສອບສິນຄ້າຫຸ້ມຫໍ່**

ຫ້າມສໍາລັບພະນັກງານທີ່ປະຕິບັດໜ້າທີ່ຮັບຜິດຊອບວຽກງານກວດສອບສິນຄ້າຫຸ້ມຫໍ່ມີພຶດຕິກໍາ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ ແລະ ປະລະໜ້າທີ່ຕໍ່ວຽກງານກວດສອບສິນຄ້າຫຸ້ມຫໍ່;
2. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທໍາ, ລໍາອຽງຕໍ່ບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ;
3. ຮັບສິນບົນ, ສວຍໃຊ້ໜ້າທີ່ເພື່ອຜົນປະໂຫຍດສ່ວນຕົວ;
4. ປອມແປງ, ແກ່ຍາວເວລາ ແລະ ຖ່ວງດຶງເອກະສານການຢັ້ງຢືນ.

**ມາດຕາ 25. ຂໍ້ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ການເຄື່ອນໄຫວວຽກງານການກວດສອບສິນຄ້າຫຸ້ມຫໍ່ ເພື່ອສ້າງອຸປະສັກກີດຂວາງ ແລະ ແຊກແຊງການເຮັດວຽກ ຂອງພະນັກງານຮັບຜິດຊອບກວດສອບສິນຄ້າຫຸ້ມຫໍ່;
2. ໂຄສະນາ, ສົ່ງເສີມສິນຄ້າຫຸ້ມຫໍ່ ທີ່ບໍ່ໄດ້ຜ່ານການກວດສອບຢ່າງຖືກຕ້ອງ;
3. ສ້າງມົນລະພິດຕໍ່ສະພາບແວດລ້ອມ ແລະ ສັງຄົມ;
4. ຊ່ວຍເຫຼືອ ປົກປ້ອງຜູ້ລະເມີດຂໍ້ຕົກລົງສະບັບນີ້;
5. ປິດບັງ, ເຊື່ອງອໍາ ການກະທໍາທີ່ເປັນການລະເມີດລະບຽບ ແລະ ກົດໝາຍ;
6. ມີພຶດຕິກໍາອື່ນທີ່ຜິດກັບລະບຽບ ແລະ ກົດໝາຍ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຮ່ວມມື, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງການວັດແທກ ຫຼື ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບການປະຕິບັດນະໂຍບາຍອື່ນຕາມລະບຽບ ແລະ ກົດໝາຍ.

ມາດຕາ 27. ມາດຕະການຕໍ່ລັດຖະກອນທີ່ກະທຳຜິດຕໍ່ໜ້າທີ່ຮັບຜິດຊອບ

ລັດຖະກອນທີ່ກົດໜ່ວງ ຫຼື ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດວິໄນ ເຊັ່ນ: ສຶກສາອົບຮົມ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ ຫຼື ໄລ່ອອກຈາກລັດຖະກອນ, ນອກຈາກນີ້ຍັງຈະໄດ້ປະຕິບັດມາດຕະການຕ່າງໆທີ່ໄດ້ລະບຸໃນໝວດທີ 8 ຂອງກົດໝາຍອາຍາ ຕາມແຕ່ລະກໍລະນີ ແລະ ຕາມລະບຽບ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

ມາດຕາ 28. ມາດຕະການຕໍ່ຜູ້ລະເມີດອື່ນໆ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປັບໃໝ, ປະຕິບັດວິໄນ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ ຕາມລະບຽບ ແລະ ກົດໝາຍ.

## ໝວດທີ 8

## ບົດບັນຍັດສຸດທ້າຍ

ມາດຕາ 29. ການຈັດຕັ້ງປະຕິບັດ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມອບໃຫ້ກົມມາດຕະຖານ ແລະ ວັດແທກ ສົມທົບກັບຂະແໜງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ.

ມາດຕາ 30. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ (ສິບຫ້າວັນ). ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າ ດ້ວຍການຈົດທະບຽນ ແລະ ກວດສອບສິນຄ້າຫຸ້ມຫໍ່, ສະບັບເລກທີ 366/ສນຍ.ອວຕຊ, ລົງວັນທີ 19/02/2010.

ທຸກລະບຽບການ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ບໍ່ວຽງຄໍາ ວົງດາລາ

# ເອກະສານຊ້ອນທ້າຍ I

1. **ຂໍ້ແນະນຳກ່ຽວກັບການຄຸ້ມຄອງວຽກງານຫຸ້ມຫໍ່**
   1.1. ຜູ້ຜະລິດຕ້ອງໄດ້ຮັບການຕິດຕາມ, ກວດກາຈາກໜ່ວຍງານກວດສອບຢ່າງໜ້ອຍ ປີລະໜຶ່ງຄັ້ງ;
   1.2. ຜູ້ຜະລິດຕ້ອງເກັບກຳຂໍ້ມູນຕ່າງໆກ່ຽວກັບການກວດສອບປະລິມານສຸດທິຂອງຜະລິດຕະພັນໄວ້ ເພື່ອນຳສະເໜີຕໍ່ພະນັກງານກວດກາ ໃນເມື່ອມີຄວາມຕ້ອງການ;
   1.3. ຜູ້ຜະລິດຈະຕ້ອງໃຫ້ຄວາມຮ່ວມມືຢ່າງເໝາະສົມ ໃນເວລາທີ່ພະນັກງານກ່ຽວຂ້ອງລົງກວດກາ;
   1.4. ກ່ອນຈະດຳເນີນການກວດກາຢູ່ໂຮງງານ ຕ້ອງໄດ້ມີເອກະສານອະນຸມັດເປັນທາງການຈຶ່ງສາມາດ ປະຕິບັດການກວດກາໄດ້.

2. **ການນຳໃຊ້ຊິງຊັ່ງທີ່ເໝາະສົມສຳລັບການຄຸ້ມຄອງ**

   ຄວາມຊັດເຈນຂອງການວັດແທກ

| ນ້ຳໜັກທັງໝົດຄິດໄລ່ເປັນກຼາມ (g) | ອັດຕາຄ່າໝາຍຂັ້ນຂອງຊິງ (d) ຄິໄລ່ເປັນກຼາມ (g) |
|---|---|
| ນ້ອຍກ່ວາ 25 | 0.01 |
| ແຕ່ 25 ເຖິງນ້ອຍກ່ວາ 1.000 | 0.1 |
| ແຕ່ 1.000 ເຖິງນ້ອຍກ່ວາ 5.000 | 1.0 |
| ແຕ່ 5.000 ຂຶ້ນໄປ | 2.0 |

3. **ການຄຸ້ມຄອງຊິງຊັ່ງສຳລັບການຫຸ້ມຫໍ່**

| ນ້ຳໜັກທັງໝົດຄິດໄລ່ເປັນກຼາມ (g) ຫຼືມິນລີລິດ (ml) | ອັດຕາຄ່າໝາຍຂັ້ນຂອງຊິງ (d) ຄິດໄລ່ເປັນກຼາມ (g) |
|---|---|
| ນ້ອຍກ່ວາ 10 | 0.1 |
| ແຕ່ 10 ເຖິງນ້ອຍກ່ວາ 50 | 0.2 |
| ແຕ່ 50 ເຖິງນ້ອຍກ່ວາ 150 | 0.5 |
| ແຕ່ 150 ເຖິງນ້ອຍກ່ວາ 500 | 1.0 |
| ແຕ່ 500 ເຖິງນ້ອຍກ່ວາ 2500 | 2.0 |
| ແຕ່ 2500 ຂຶ້ນໄປ | 5.0 |

# ເອກະສານຊ້ອນທ້າຍ II

ແບບແຜນສໍາລັບການກວດສອບຂອງພະນັກງານກວດສອບ

1. ຊຸດຜະລິດຕະພັນກວດສອບຈະຕ້ອງໄດ້ສົມພຸດວ່າ ມີຈໍານວນເທົ່າກັນເມື່ອໃດຫາກເຫັນວ່າບໍ່ມີສິ່ງຜິດຕໍ່ຫຼັກການຂອງການກວດສອບ;
2. ຫຸ້ມຫໍ່ທີ່ຈະນໍາມາເປັນຕົວຢ່າງກວດສອບຈະຕ້ອງໄດ້ຖືກຄັດເລືອກ ໂດຍການນໍາໃຊ້ວິທີການຊຸ່ມເອົາຕົວຢ່າງ;
3. ບັນດາຫຸ້ມຫໍ່ທີ່ໄດ້ນໍາມາເປັນຕົວຢ່າງກວດສອບນັ້ນ ຈະໄດ້ຖືກເກັບມ້ຽນຄືນຈາກຜູ້ຫຸ້ມຫໍ່ພາຍຫຼັງກວດສອບແລ້ວ;
4. ຊຸດຜະລິດຕະພັນກວດສອບທີ່ຈະນໍາມາປະຕິບັດການຈະຕ້ອງແມ່ນ ຊຸດຜະລິດຕະພັນທີ່ຜະລິດອອກພາຍໃນໜຶ່ງຊົ່ວໂມງ.

ແບບແຜນການກວດສອບຫຸ້ມຫໍ່ທີ່ມີຄ່າກໍານົດສະແດງເປັນຫົວໜ່ວຍນໍ້າໜັກ ແລະ ບໍລິມາດ:

## 1. ການຊຸ່ມຕົວຢ່າງແບບທໍາມະດາ

| (ຈໍານວນສິນຄ້າຫຸ້ມຫໍ່) ຫຼື ຈໍານວນຊຸດຜະລິດຕະພັນ l | (ຈໍານວນສິນຄ້າຫຸ້ມຫໍ່ທີ່ໃຊ້ເປັນຕົວຢ່າງເພື່ອກວດສອບ ຫຼື ຈໍານວນການຊັກຕົວຢ່າງ) n | (ຈໍານວນຫຸ້ມຫໍ່ທີ່ເກີນ ແລະ ຫຼຸດ) c | (ຄ່າດັດແກ້) k |
|---|---|---|---|
| 100 ເຖິງ 500 | 50 | 3 | 0.379 |
| 501 ເຖິງ 3.200 | 80 | 5 | 0.295 |
| ຫຼາຍກ່ວາ 3.200 | 125 | 7 | 0.234 |

$\overline{X_0} = \overline{X_1} = KS$ (S ແມ່ນລະດັບຂອງ $X_1$ )

$\overline{X_0}$ =ໝາຍເຖິງຄ່າສະເລ່ຍທີ່ຖືກດັບແກ້

$\overline{X_1}$ = ໝາຍເຖິງຄ່າສະເລ່ຍຂອງ $X_1$

$X_1$ = ໝາຍເຖິງຄ່າຂອງ $X_1$

## 2. ການກວດສອບທັງໝົດ

ສໍາລັບຊຸດຜະລິດຕະພັນທີ່ມີຈໍານວນນ້ອຍກ່ວາ 100 (ແຕ່ 10-99 ) ແມ່ນຈະຕ້ອງໄດ້ກວດສອບທັງໝົດ ແລະ ຄ່າອະນຸຍາດສໍາລັບຫຸ້ມຫໍ່ທີ່ບໍ່ສອດຄ່ອງຈະຕ້ອງບໍ່ໃຫ້ກາຍ 2,5 % ຂອງຈໍານວນຫຸ້ມຫໍ່ທັງໝົດ.

3. ການທົບສອບເພື່ອທຳລາຍ

| (ຈຳນວນສິນຄ້າຫຸ້ມຫໍ່) ຫຼື ຈຳນວນຊຸດຜະລິດ ຕະພັນ<br>L | (ຈຳນວນສິນຄ້າຫຸ້ມຫໍ່ທີ່ຊັກຕົວຢ່າງ ເພື່ອກວດສອບ ຫຼື ຈຳນວນການຊັກ ຕົວຢ່າງ)<br>n | (ຈຳນວນຫຸ້ມຫໍ່ທີ່ ເກີນ ແລະຫຼຸດ)<br>c | (ຄ່າດັດແກ້)<br>k |
|---|---|---|---|
| ເທົ່າກັບຫຼືຫຼາຍກ່ວາ 100 | 20 | 1 | 0.640 |

ແບບແຜນການກວດສອບຫຸ້ມຫໍ່ທີ່ມີຄ່າກຳນົດສະແດງເປັນຫົວໜ່ວຍລວງຍາວ, ເນື້ອທີ່ ແລະ ເລກຄິດໄລ:

| (ຈຳນວນສິນຄ້າຫຸ້ມຫໍ່) ຫຼື ຈຳນວນຊຸດຜະລິດ ຕະພັນ<br>L | (ຈຳນວນສິນຄ້າຫຸ້ມຫໍ່ທີ່ຊັກຕົວຢ່າງ ເພື່ອກວດສອບ ຫຼື ຈຳນວນການຊັກ ຕົວຢ່າງ )<br>n | (ຈຳນວນຫຸ້ມຫໍ່ທີ່ ເກີນ ແລະ ຫຼຸດ)<br>c | (ຄ່າດັດແກ້)<br>a |
|---|---|---|---|
| 26 ເຖິງ 50 | 3 | 0 | 1.00 |
| 51 ເຖິງ 150 | 5 | 0 | 0.35 |
| 151 ເຖິງ 500 | 8 | 1 | 0.20 |
| 501 ເຖິງ 3200 | 13 | 1 | 0.15 |
| ຫຼາຍກ່ວາ 3200 | 20 | 1 | 0.10 |

$\overline{X_0} = \overline{X_1} + aR$ (R ແມ່ນລະດັບຂອງ $X_1$ )

$\overline{X_0}$ =ໝາຍເຖິງຄ່າສະເລ່ຍທີ່ຖືກດັບແກ້

$\overline{X_1}$ = ໝາຍເຖິງຄ່າສະເລ່ຍຂອງ $X_1$

$X_1$ = ໝາຍເຖິງຄ່າຂອງ $X_1$

ຂໍ້ແນະນຳກ່ຽວກັບຄວາມຜິດພາດສຳລັບສິນຄ້າຫຸ້ມຫໍ່ທີ່ບໍ່ເທົ່າກັນ

ສຳລັບຈຳນວນຫຸ້ມຫໍ່ທີ່ບໍ່ເທົ່າກັນ ແລະສະແດງດ້ວຍຫົວໜ່ວຍນ້ຳໜັກ, ຄ່າຄວາມຜິດພາດແມ່ນບໍ່ໃຫ້ຫຼາຍກ່ວາຄ່າທີ່ໄດ້ກຳນົດຕາມຕາຕະລາງລຸ່ມນີ້:

| ປະລິມານຄ່າກຳນົດ (Qn)<br>ຄິດໄລ່ເປັນກຼາມ (g) | ຄ່າອະນຸຍາດຜິດພາດ<br>ຄິດໄລ່ເປັນກຼາມ (g) |
|---|---|
| ນ້ອຍກ່ວາ 500 | 2.0 |
| ແຕ່ 501-2000 | 5.0 |
| ແຕ່ 2001-10000 | 10.0 |

# ເອກະສານ ຊ້ອນທ້າຍ III

**ການລະບາຍປະລິມານນ້ຳອອກຈາກຜະລິດຕະພັນທີ່ເປັນຂອງແຫຼວ**

3.1 ຂັ້ນຕອນດັ່ງກ່າວນີ້ແມ່ນສາມາດນຳໃຊ້ເພື່ອກຳນົດການລະບາຍນ້ຳອອກ ຈາກຜະລິດຕະພັນທີ່ເປັນທາດແຫຼວ ແລະ ຍັງສາມາດນຳໃຊ້ສິນຄ້າຫຸ້ມຫໍ່ທີ່ມີຄ່າກຳນົດເຖິງ 50 ກິໂລກຼາມ, ໃນກໍລະນີຜະລິດຕະພັນທີ່ເປັນໝາກ, ເປັນໜ່ວຍຢູ່ໃນທາດແຫຼວແມ່ນປະຕິບັດຕາມແຕ່ລະກໍລະນີ ລຸ່ມນີ້:

3.1.1 ທາດແຫຼວສຳລັບດອງທີ່ໃຊ້ບໍ່ໄດ້ ໝາຍເຖິງທາດແຫຼວທີ່ບັນຈຸໃນສິນຄ້າຫຸ້ມຫໍ່ທີ່ກິນຫຼື ໃຊ້ບໍ່ໄດ້ (ຕົວຢ່າງ: ນ້ຳສົ້ມທີ່ບັນຈຸໃນກະປ່ອງໝາກແຕງດອງ), ຄຳເວົ້າວ່າ: "ສິ່ງບັນຈຸຫຸ້ມຫໍ່" (ມີຄວາມໝາຍຄ້າຍຄືກັນກັບ: ປະລິມານຂອງຜະລິດຕະພັນ) ແມ່ນສາມາດນຳໃຊ້ໄດ້ກັບຜະລິດຕະພັນທີ່ເປັນໝາກ, ເປັນໜ່ວຍ, ໃນກໍລະນີນີ້ ຜະລິດຕະພັນທີ່ເປັນໝາກ, ເປັນໜ່ວຍແມ່ນສິ່ງທີ່ບັນຈຸໃນພາຊະນະຫຸ້ມຫໍ່ ໂດຍບໍ່ນັບເອົາພາຊະນະຫຸ້ມຫໍ່ ແລະ ທາດແຫຼວ ຫຼື ທາດແຫຼວປະສົມ; ສຳລັບດອງ

3.1.2 ທາດແຫຼວ ຫຼື ທາດແຫຼວປະສົມ ສຳລັບດອງທີ່ໃຊ້ໄດ້ ໝາຍເຖິງທາດແຫຼວທີ່ບັນຈຸໃນສິນຄ້າຫຸ້ມຫໍ່ທີ່ກິນ ຫຼື ໃຊ້ໄດ້ຕົວຢ່າງ: ນ້ຳໝາກອາງຸ່ນ, ນ້ຳໝາກໄມ້ປັ່ນ), ຄຳເວົ້າວ່າ: "ສິ່ງບັນຈຸຫຸ້ມຫໍ່" (ມີຄວາມໝາຍຄ້າຍຄືກັນກັບ: ປະລິມານຂອງຜະລິດຕະພັນ) ແມ່ນ ສາມາດນຳໃຊ້ໄດ້ກັບຜະລິດຕະພັນທີ່ເປັນໝາກ, ໜ່ວຍ ແລະ ທາດແຫຼວສຳລັບດອງ;

3.1.3 ທາດແຫຼວ ຫຼື ທາດແຫຼວປະສົມ ສຳລັບດອງທັງສອງຢ່າງທີ່ກ່າວມາຂ້າງເທິງນັ້ນສາມາດນຳໃຊ້ໄດ້ (ຕົວຢ່າງ: ນ້ຳກະປ໋ອງໝາກໄມ້, ກະປ໋ອງປາ) ນິຍາມກ່ຽວກັບພາຊະນະຫຸ້ມຫໍ່ກໍ່ບໍ່ສາມາດ ຈຳແນກໄດ້ລະຫວ່າງທາດ ແຫຼວ ຫຼື ທາດປະສົມຂອງ ສິນຄ້າ. ດັ່ງນັ້ນການລະບຸປະລິມານໃນສະຫຼາກຈະຊັດເຈນໄດ້ກໍ່ຕໍ່ເມື່ອວ່າທາດ ແຫຼວ ຫຼື ທາດປະສົມ ສຳລັບດອງ "ມີຄວາມໝາຍເຖິງທາດ ຫຼື ທາດປະສົມທີ່ຖືກປະຖິ້ມຫຼັງຈາກການໃຊ້ແລ້ວ" ຫຼື ບໍ່ໃນກໍລະນີນີ້ ຜະລິດຕະພັນທີ່ເປັນໝາກ, ໜ່ວຍ ແລະ ຂອງກາງແຫຼວ ຕ້ອງໄດ້ສະແດງໃຫ້ເຫັນຢູ່ໃນສະຫຼາກ.

## <u>ບັນຊີສິນຄ້າຫຸ້ມຫໍ່ ຕ້ອງໄດ້ຂຶ້ນທະບຽນ ແລະ ກວດສອບຢູ່ໃນ ສປປ ລາວ</u>

1. ຊີ້ນສັດ ແລະ ສ່ວນອື່ນໆຂອງສັດທີ່ບໍລິໂພກໄດ້ຈາກງົວ, ຄວາຍ, ໝູ, ແກະ ແລະ ສັດປີກ;
2. ສັດນ້ຳ, ຊີ້ນສັດນ້ຳ ແລະ ສ່ວນອື່ນໆຂອງສັດນ້ຳທີ່ບໍລິໂພກໄດ້ຈາກ ສັດຈຳພວກປາ, ກຸ້ງ, ປູ, ປາມຶກ, ຫອຍ ແລະ ປີງທະເລ;
3. ນົມສົດ, ນົມຂຸ້ນ, ນົມຜົງ, ນົມເມັດ, ຜະລິດຕະພັນນົມ ແລະ ນົມປຸງແຕ່ງ;

4. ຄີມຫຼຸມ, ຄີມຜົງ, ລວມເຖິງຄີມຫຼຸມ, ໂຍເກີດ, ນົມສົ້ມ, ເນີຍ, ເນີຍແຂງ ແລະ ລວມເຖິງເນີຍຫຼຸມ;
5. ອາຫານປຸງແຕ່ງ ຫຼື ເຮັດໄວ້ບໍ່ໃຫ້ເສຍຄຸນນະພາບງ່າຍ, ສິ່ງສະກັດ ແລະ ນ້ຳຄັ້ນລູກຊີ້ນໄສ້ກອກ ແລະ ຜະລິດຕະພັນ ທີ່ຄ້າຍກັນທີ່ໄດ້ຈາກຊີ້ນສັດ, ຈຳພວກສັດປີກ, ສັດນ້ຳ ແລະ ສ່ວນອື່ນໆ ຂອງສັດທີ່ບໍລິໂພກໄດ້;
6. ພືດ, ຜັກ, ຮາກໄມ້ ແລະ ຫົວຂອງພືດທີ່ບໍລິໂພກໄດ້ລວມເຖິງເຫັດຊະນິດຕ່າງໆ, ໜໍ່ໄມ້ ແລະ ສາລີອ່ອນ;
7. ໝາກເຜັດແຫ້ງ, ພິກໄທແຫ້ງລວມທັງຊະນິດທີ່ບົດ ຫຼື ປົ່ນ;
8. ໝາກໄມ້ ແລະ ເປືອກໝາກໄມ້ທີ່ບໍລິໂພກໄດ້;
9. ເມັດພືດ ແລະ ເມັດໝາກໄມ້ທີ່ບໍລິໂພກໄດ້ລວມເຖິງເມັດໝາກງາ, ເມັດໝາກແຕງໂມ, ຖົ່ວເຫຼືອງ, ເມັດໝາກ ມ່ວງຫິມະພານ ແລະ ເມັດແກ່ນຕາເວັນ;
10. ສາຫຼ່າຍທະເລ;
11. ເຂົ້າເປືອກ, ເຂົ້າສານ ແລະ ທັນຍາພືດອື່ນໆ
12. ແປ້ງທີ່ປະກອບເປັນອາຫານທີ່ເຮັດຈາກພືດ, ເມັດທັນຍາພືດທີ່ເຮັດໃຫ້ແບນ, ເຮັດເປັນເມັດ, ມັນເທດ, ເຜືອກ, ພືດຕະກຸນຖົ່ວ, ສາຄູ ຫຼື ມັນຕົ້ນ;
13. ພືດ, ຜັກ ແລະ ສ່ວນອື່ນໆ ຂອງພືດທີ່ບໍລິໂພກໄດ້ທີ່ປຸງແຕ່ງ ຫຼື ເຮັດໄວ້ບໍ່ໃຫ້ເສຍຄຸນນະພາບງ່າຍ ໂດຍການດອງ, ແຊ່ ແລະ ໝັກ;
14. ອາຫານປຸງແຕ່ງທີ່ເຮັດຈາກທັນຍາພືດມັນຝລັ່ງ, ພືດຕະກຸນຖົ່ວ, ເມັດພືດ, ເມັດໝາກໄມ້ຫຼືແປ້ງປະກອບ ອາຫານ ທີ່ເຮັດໃຫ້ຟູ, ຂົ້ວ, ອົບ ຫຼື ປີ້ງ, ຂະໜົມປັງ, ຄຸກກີ້ ແລະ ຂະໜົມອົບກອບ;
15. ໝີ່, ເສັ້ນໝີ່, ເຝີ, ເຂົ້າປຸ້ນ, ກ້ວຍຈັບ, ວຸ້ນເສັ້ນ, ສະປາເກັດຕີ້, ມັກກະໂລນີ ແລະ ອາຫານປຸງແຕ່ງ ດັ່ງກ່າວລວມ ທັງໂຈກໃນລັກສະນະເຄິ່ງສຳເລັດຮູບ;
16. ອາຫານປຸງແຕ່ງສຳລັບໃຊ້ລ້ຽງເດັກນ້ອຍ;
17. ຜົງໂກໂກ້, ອາຫານປຸງແຕ່ງອື່ນໆທີ່ມີໂກໂກ້, ຊອກໂກແລັດ ລວມທັງທີ່ເປັນຂອງແຫຼວ, ເປັນຜົງເປັນ ເມັດ, ເປັນ ແຜ່ນ ຫຼື ເປັນແທ່ງ;
18. ເມັດກາເຟຂົ້ວ, ໃບຊາ, ກາເຟ ແລະ ຊາສຳເລັດຮູບລວມທັງຜະລິດຈາກພືດ ທີ່ໃຊ້ສຳຫຼັບຊົງດື່ມ;
19. ແຍມ, ເຍລີ້, ວຸ້ນ ແລະ ກວນໝາກໄມ້;
20. ນ້ຳຕານຊາຍແດງ, ນ້ຳຕານຊາຍຂາວ, ນ້ຳຕານກ້ອນ, ນ້ຳຕານລະອຽດ, ນ້ຳຕານໝາກພ້າວ, ນ້ຳຕານທີ່ເປັນຜົງ ແລະແຫຼວ, ສານໃຫ້ຄວາມຫວານແທນນ້ຳຕານ, ນ້ຳເຜິ້ງນ້ຳເຜິ້ງຫຼຸມ, ນ້ຳເຊື່ອມ, ນ້ຳຕານທີ່ປຸງກິ່ນ, ລົດ ຫຼື ແຕ່ງສີ ແລະ ເຂົ້າໜົມທຸກປະເພດ;
21. ນ້ຳມັນສັດ ແລະ ນ້ຳມັນພືດທີ່ບໍລິໂພກໄດ້;

22. ນ້ຳປາ, ນ້ຳສົ້ມສາຍຊູ, ນ້ຳຊີອິ້ວ, ຊອດຖົ່ວເຫຼືອງ, ຊອດພິກ, ຊອດໝາກເລັ່ນ, ຊອດຫອຍນາງລົມ, ນ້ຳມັນຫອຍ, ນ້ຳສະລັດ ແລະ ນ້ຳແຈ່ວຕ່າງໆ;

23. ເຄື່ອງແກງສຳເລັດຮູບ, ກະປິ, ນ້ຳກະທິ, ກະທິຜົງ ແລະ ເຄື່ອງປຸງແຕ່ງອາຫານ;

24. ເກືອສຳຫຼັບບໍລິໂພກ;

25. ແປ້ງນົວ ແລະ ເຄື່ອງປຸງແຕ່ງລົດຊາດອາຫານທຸກຊະນິດ;

26. ນ້ຳດື່ມ, ນ້ຳແຮ່, ນ້ຳຫວານ,ນ້ຳໝາກໄມ້, ນ້ຳພືດຜັກ, ນ້ຳນົມຖົ່ວເຫຼືອງ, ນ້ຳເກືອແຮ່, ເຄື່ອງດື່ມບຳລຸງກຳລັງ, ນ້ຳອັດລົມ, ເຫຼົ້າ, ເບຍ ລວມທັງເຄື່ອງດື່ມອື່ນໆທີ່ມີ ແລະ ບໍ່ມີທາດເຫຼົ້າ;

27. ອາຫານສັດ;

28. ປູນຂາວ ແລະ ປູນຍາແນວ;

29. ປູນຊີມັງ;

30. ນ້ຳມັນກ໊າດ;

31. ນ້ຳມັນຫຼໍ່ລື່ນ, ນ້ຳມັນເບກ, ນ້ຳມັນພາເວີ ແລະ ນ້ຳມັນກະແລັດ;

32. ແກັດສປີໂຕລຽມແຫຼວສະເພາະທີ່ບັນຈຸໃສ່ຖັງໃຊ້ສຳລັບຫຸງຕົ້ມ;

33. ປຸຍເຄມີ ແລະ ປຸຍຊີວະພາບ;

34. ສີນ້ຳ, ສີນ້ຳມັນ ແລະ ວາຣນິດສຳລັບໃຊ້ຕົກແຕ່ງອາຄານ, ສິ່ງກໍ່ສ້າງ ຫຼື ວັດສະດຸອື່ນໆ;

35. ທິນເນີ້ ແລະ ນ້ຳມັນສົນ;

36. ມຶກສຳລັບຂຽນ ຫຼື ພິມ;

37. ແປ້ງທາໜ້າຊະນິດຕ່າງໆ (ເຄື່ອງສຳອາງ);

38. ຄີມ ແລະ ໂລຊັ່ນສຳລັບທາໜ້າ ແລະ ຜິວ;

39. ຢາສະຜົມ, ຄີມນວດຜົມ, ຜະລິດຕະພັນບຳລຸງຮັກສາເສັ້ນຜົມ, ປູກຜົມ ຫຼື ຍ້ອມຜົມ;

40. ນ້ຳມັນ ຫຼື ຄີມໃສ່ຜົມ ແລະ ເຈວແຕ່ງຊົງຜົມ;

41. ຢາສີແຂ້ວ ແລະ ນ້ຳຢາບ້ວນປາກ;

42. ສະບູ ທີ່ເປັນຂອງແຂງກ້ອນ ແລະ ຂອງແຫຼວລວມເຖິງຜະລິດຕະພັນສຳລັບໃຊ້ອາບນ້ຳ ຫຼື ຊຳລະລ້າງຮ່າງກາຍ;

43. ຄີມໂຟມຫຼື ເຈວສຳລັບລ້າງໜ້າ;

44. ສະບູຜົງຝຸ່ນໃຊ້ຊັກເຄື່ອງນຸ່ງ, ນ້ຳຢາຊັກເຄື່ອງນຸ່ງ ແລະ ຜະລິດຕະພັນຊັກເຄື່ອງອື່ນໆລວມເຖິງຜະລິດຕະພັນຟອກຜ້າຂາວ, ຜະລິດຕະພັນກຳຈັດຄາບເປື້ອນ ແລະ ນ້ຳຢາປັບຜ້ານຸ້ມ;

45. ນ້ຳຢາລີດຜ້າ ແລະ ນ້ຳຢາດັບກິ່ນ;

46. ຜະລິດຕະພັນສຳລັບລ້າງພືດຜັກ ແລະ ໝາກໄມ້;

47. ຜະລິດຕະພັນສຳລັບໃຊ້ຊຳລະລ້າງ ຫຼື ທຳຄວາມສະອາດເຄື່ອງໃຊ້ໃນຄົວ, ພື້ນເຮືອນ ແລະ ເຄື່ອງສຸກຂະພັນ;
48. ນ້ຳຢາທຳຄວາມສະອາດແວ່ນ;
49. ນ້ຳຢາຂັດເງົາ ຫຼື ຄີມຂັດເງົາສຳລັບຂັດເກີບ, ເຄື່ອງໜັງ ແລະ ໂລຫະ;
50. ໄມ້ຂີດໄຟ;
51. ທູບ;
52. ທຽນໄຕ້ທຸກປະເພດ;
53. ເຈ້ຍທິດຊູ, ເຈ້ຍທິດຊູເຊັດໜ້າ, ເຈ້ຍທິດຊູເຊັດມື, ເຈ້ຍທິດຊູເຊັດປາກ, ເຈ້ຍທິດຊູທຳຄວາມສະອາດ;
54. ເຈ້ຍສຳລັບຂຽນຫຼືພິມ;
55. ເສັ້ນຝາຍ;
56. ໄໝພົມ;
57. ຜ້າອານາໄມ, ແຜ່ນອານາໄມ ແລະ ຜ້າອ້ອມສຳເລັດຮູບ;
58. ສຳລີ ແລະ ກ້ານສຳລີ;
59. ຕະປູທຸກຊະນິດ.